# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ
# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 10
## ທັກສະການຄົ້ນຄ້ວາຄຳຮ້ອງ ແລະ ການແນະນຳຄູ່ກໍລະນີ ໃນການໄກ່ເກ່ຍ
## Skills in researching claims and guiding parties in mediation

### 1. ທັກສະໃນການຄົ້ນຄວ້າຄຳຮ້ອງຂອງຄູ່ກໍລະນີ

#### 1.1. ການຄົ້ນຄວ້າຄຳຮ້ອງຂໍໄກ່ເກ່ຍ

ການຄົ້ນຄວ້າສຳນວນເອກະສານຄຳຮ້ອງຂໍ ຖືເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍ (ຝ່າຍຮ້ອງຂໍ) ພ້ອມດ້ວຍເອກະສານທີ່ປະກອບແລ້ວ ພະແນກສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າວສານ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງສູນແກ້ຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ໜ່ວຍງານສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າວສານ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກຈາກກວດກາຄຳຮ້ອງຂໍ ແລະ ເອກະສານປະກອບໃນເບື້ອງຕົ້ນແລ້ວ ມີໜ້າທີ່ປະກອບເປັນສຳນວນຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອນຳສະເໜີຕໍ່ຫົວໜ້າສູນ ຫຼື ຫົວໜ້າໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ ດັ່ງນີ້:

ມອບສຳນວນຄຳຮ້ອງຂໍໃຫ້ພະແນກແກ້ໄຂ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຄົ້ນຄວ້າເບື້ອງຕົ້ນແລ້ວລາຍງານຜົນຂອງການຄົ້ນຄວ້າຄຳຮ້ອງຕໍ່ຫົວໜ້າສູນ ຫຼື ຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອເຊີນຄູ່ກໍລະນີອີກຝ່າຍໜຶ່ງ (ຝ່າຍຖືກຮ້ອງຂໍ) ເຂົ້າມາຮັບຊາບຕໍ່ຄຳຮ້ອງຂໍ ແລະ ແກ້ຄຳຮ້ອງ ພ້ອມທັງປຶກສາຫາລືຕົກລົງກ່ຽວກັບຮູບການແກ້ໄຂ. ຖ້າຄູ່ກໍລະນີອີກຝ່າຍໜຶ່ງຫາກບໍ່ມາຕາມໝາຍເຊີນ ຄຳຮ້ອງຂໍດັ່ງກ່າວກໍຈະບໍ່ຖືກພິຈາລະນາ ແລະ ສົ່ງຄຳຮ້ອງຂໍຄືນໃຫ້ແກ່ຝ່າຍຮ້ອງຂໍ.

ໃນກໍລະນີທີ່ຄຳຮ້ອງຂໍກ່ຽວກັບຂໍ້ຂັດແຍ່ງຫາກບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ[1], ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍພ້ອມດ້ວຍເຫດຜົນພາຍໃນຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

ການຄົ້ນຄ້ວາ ແລະ ພິຈາລະນາຄຳຮ້ອງຂໍ ຕ້ອງກວດກາເບິ່ງວ່າຄຳຮ້ອງຂໍນັ້ນຖືກຕ້ອງສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ່ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ຫຼື ບໍ່? ຖ້າຫາກວ່າຖືກຕ້ອງກໍສາມາດຮັບມາພິຈາລະນາ, ແຕ່ຖ້າຫາກວ່າບໍ່ຖືກຕ້ອງກໍ່ບໍ່ສາມາດຮັບມາພິຈາລະນາໄດ້. ເງື່ອນໄຂການຮັບເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດມາພິຈາລະນາ ຢູ່

[1] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018, ມາດຕາ 16.

ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເປັນຂໍ້ຂັດແຍ່ງທີ່ເກີດຈາກການລະເມີດສັນຍາທາງດ້ານເສດຖະກິດ ຫຼື ການດຳເນີນທຸລະກິດ, ແຕ່ຕ້ອງມີເງື່ອນໄຂໃດໜຶ່ງດັ່ງນີ້:

1) ແມ່ນຂໍ້ຂັດແຍ່ງທີ່ຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ໄດ້ສະໝັກໃຈໃຫ້ແກ້ໄຂ ໝາຍຄວາມວ່າ: ຂໍ້ຂັດແຍ່ງນັ້ນຄູ່ກໍລະນີໄດ້ຕົກລົງກັນກ່ຽວກັບບັນຫາການແກ້ໄຂຂໍ້ຂັດແຍ່ງ ໂດຍສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄວ້ໃນສັນຍາທີ່ຄູ່ກໍລະນີທັງສອງຝ່າຍໄດ້ສ້າງຂຶ້ນ ຫຼື ຄູ່ກໍລະນີໄດ້ສະໝັກໃຈໃຫ້ແກ້ໄຂຂໍ້ຂັດແຍ່ງ ໝາຍຄວາມວ່າ ຂໍ້ຂັດແຍ່ງນັ້ນຄູ່ກໍລະນີໄດ້ຕົກລົງກັນກ່ຽວກັບບັນຫາການແກ້ໄຂຂໍ້ຂັດແຍ່ງ ໂດຍສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄວ້ໃນສັນຍາ ຫຼື ຄູ່ກໍລະນີໄດ້ສ້າງຂຶ້ນ ຫຼື ຄູ່ກໍລະນີທັງສອງຝ່າຍໄດ້ສະໝັກໃຈໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນບ່ອນພິຈາລະນາແກ້ໄຂ ໃນເວລາມີຂໍ້ຂັດແຍ່ງເກີດຂຶ້ນຈາກການລະເມີດການປະຕິບັດສັນຍາທາງດ້ານເສດຖະກິດ ຫຼື ການດຳເນີນທຸລະກິດ ເຖິງວ່າຄູ່ກໍລະນີຈະບໍ່ໄດ້ກຳນົດບັນຫາກ່ຽວການແກ້ໄຂຂໍ້ຂັດແຍ່ງໄວ້ໃນສັນຍາເບື້ອງຕົ້ນກໍຕາມ ໃນພາກປະຕິບັດຕົວຈິງແລ້ວສະແດງອອກ ດັ່ງນີ້:

ພາຍຫຼັງທີ່ມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີທັງສອງຝ່າຍໄດ້ເປັນເອກະພາບຕົກລົງກັນເປັນລາຍລັກອັກສອນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ແລ້ວຍື່ນເຂົ້າມາຍັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດານເສດຖະກິດ ເພື່ອດຳເນີນຕາມຂັ້ນຕອນການດຳເນີນການແກ້ໄຂ ຫຼື ຝ່າຍຮ້ອງຂໍຍື່ນຄຳຮ້ອງມາຍັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ ແລະ ຝ່າຍຖືກຮ້ອງຂໍ ກໍຍື່ນຄຳແກ້ຄຳຮ້ອງຂໍມາຍັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອໃຫ້ພິຈາລະນາແກ້ໄຂ.

2) ບໍ່ແມ່ນຂໍ້ຂັດແຍ່ງທີ່ສານປະຊາຊົນພວມດຳເນີນການແກ້ໄຂຢູ່ ຫຼື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໝາຍຄວາມວ່າ ຂໍ້ຂັດແຍ່ງດັ່ງກ່າວນັ້ນບໍ່ທັນຖືກສານປະຊາຊົນພວມດຳເນີນການແກ້ໄຂ ຫຼື ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃນທາງປະຕິບັດຕົວຈິງທາງພະແນກແກ້ໄຂ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງສຳນວນເອກະສານຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງນັ້ນ ມີເອກະສານໃດທີ່ສະແດງໃຫ້ເຫັນວ່າສານປະຊາຊົນພວມດຳເນີນການແກ້ໄຂຂໍ້ຂັດແຍ່ງ ນັ້ນ ຫຼື ບໍ່? ໂດຍກວດກາລະອຽດວ່າມີເລກທີ່ຂາເຂົ້າ ຂອງສານປະຊາຊົນ ຫຼື ບໍ່? ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຫຼືບໍ່? ຖ້າຫາກບໍ່ມີຂໍ້ຂັດແຍ່ງດັ່ງກ່າວແມ່ນສາມາດນຳມາພິຈາລະນາໂດຍສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້.

3) ບໍ່ແມ່ນຂໍ້ຂັດແຍ່ງທີ່ພົວພັນກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ ໃນທາງປະຕິບັດຕົວຈິງທາງພະແນກແກ້ໄຂ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງສຳນວນເອກະສານຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງນັ້ນ ຕ້ອງບໍ່ແມ່ນຂໍ້ຂັດແຍ່ງທີ່ລະເມີດລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນການກະທຳຜິດທາງອາຍາ ເຊັ່ນ:ການກະບົດ, ການທໍລະຍົດຕໍ່ຊາດ, ການເປັນນັກສືບສອດແນມ, ການທຳລາຍມ້າງເພ, ການປອມແປງເງິນ ຫຼື ການໃຊ້ເງິນປອມ, ການຟອກເງິນ, ການທຳຮ້າຍຮ່າງກາຍ, ການຫລິ້ນການພະນັນທີ່ບໍ່ໄດ້ຮັບອະນຸຍາດ, ການລັກຊັບສົມບັດ, ການຄ້າຢາເສບຕິດ, ການຂາຍອາວຸດເສິກໂດຍບໍ່ຖືກຕ້ອງຕາມກົດໝາຍ, ການຕັດໄມ້ທຳລາຍປ່າ, ການເຮັດໃຫ້ເກີດມົນລະພິດທາງອາກາດທາງໜ້າດິນ, ໜ້ານໍ້າ ແລະ ອື່ນໆ ຖ້າຫາກບໍ່ແມ່ນຂໍ້ຂັດແຍ່ງດັ່ງກ່າວນັ້ນແມ່ນສາມາດນຳມາພິຈາລະນາ ໂດຍສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ສຳລັບຂໍ້ຂັດແຍ່ງທາງແພ່ງທົ່ວໄປເປັນຕົ້ນແມ່ນຂໍ້ຂັດແຍ່ງກ່ຽວກັບການສືບທອດມູນມໍລະດົກ, ຂໍ້ຂັດແຍ່ງສາຍພົວພັນຄອບຄົວ, ຂໍ້ຂັດແຍ່ງການຂໍເອົາເດັກໄປເປັນລູກລ້ຽງ, ຂໍ້ຂັດແຍ່ງຮຽກຮ້ອງເອົາຄ່າລ້ຽງດູລູກ ແລະ ອື່ນໆ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນບໍ່ສາມາດນຳມາພິຈາລະນາໄດ້.

ສັງລວມແລ້ວການຄົ້ນຄ້ວາຄໍາຮ້ອງຂໍ ແລະ ບັນດາເອກະສານທີ່ປະກອບໃນສໍານວນຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຕ້ອງຮັບປະກັນໃຫ້ສໍາເລັດເປັນລາຍລັກອັກສອນ ແລະ ທັນຕາມກໍານົດເວລາຫ້າວັນລັດຖະການ ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບເງື່ອນໄຂການຮັບເອົາຂໍ້ຂັດແຍ່ງມາພິຈາລະນາຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ່ 51/ສພຊ, ລົງວັນທີ 22 ມິຖຸນາ 2018.

## 1.2. ການຄົ້ນຄວ້າຄໍາແກ້ຄໍາຮ້ອງຂໍ, ຄໍາຮ້ອງແຍ່ງ

ການແກ້ຄໍາຮ້ອງຂໍ ແມ່ນການນໍາໃຊ້ສິດໃນການໂຕ້ແຍ່ງເປັນລາຍລັກອັກສອນຂອງຄູ່ກໍລະນີອີກຝ່າຍໜຶ່ງ (ຝ່າຍຢືກຮ້ອງຂໍ) ພາຍຫຼັງທີ່ໄດ້ເຂົ້າ ມາ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ການແກ້ຄໍາຮ້ອງຂໍນັ້ນແມ່ນການຊີ້ໃຫ້ເຫັນວ່າຄູ່ກໍລະນີອີກຝ່າຍໜຶ່ງ ໄດ້ຮັບຮູ້ວ່າຕົນໄດ້ມີຂໍ້ຂັດແຍ່ງກ່ຽວກັບຜົນປະໂຫຍດ ທີ່ເກີດຈາກການລະ ເມີດສັນຍາການດໍາເນີນການຜະລິດ-ທຸລະກິດ ກັບຄູ່ກໍລະນີທີ່ໄດ້ຍື່ນຄໍາຮ້ອງຂໍ ແລະ ພ້ອມກັບການແກ້ຄໍາຮ້ອງຂໍນັ້ນຄູ່ກໍລະນີຝ່າຍຖືກຮ້ອງຂໍກໍສາມາດຍື່ນຄໍາຮ້ອງແຍ່ງ ໃນກໍລະນີທີ່ເຫັນວ່າຝ່າຍທີ່ຮ້ອງຂໍຍັງມີພັນທະທີ່ຕ້ອງປະຕິບັດຕໍ່ຕົນ ເພື່ອຮ້ອງແຍ່ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂໄປພ້ອມກັນ.

ພາຍຫຼັງຜູ້ຖືກຮ້ອງຂໍ ໄດ້ຮັບຄໍາຮ້ອງຂໍພ້ອມເອກະສານທີ່ກ່ຽວຂ້ອງແລ້ວແມ່ນໃຫ້ສົ່ງຄໍາແກ້ຄໍາຮ້ອງຂໍພາຍໃນກໍານົດສິບຫ້າວັນ ເນື້ອໃນຄໍາແກ້ຄໍາຮ້ອງຂໍນັ້ນແມ່ນສະແດງເຖິງການຮັບຮູ້ ຫຼື ປະຕິເສດ ຫຼື ຮ້ອງຂໍແຍ່ງຕໍ່ຄໍາຮ້ອງຂໍຕາມເນື້ອໃນຕົ້ນຕໍທີ່ໄດ້ກໍານົດໄວ້ ດັ່ງນີ້[2]:

- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ບ່ອນຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
- ບັນຫາທີ່ເກີດຂໍ້ຂັດແຍ່ງ;
- ມູນຄ່າຂອງຂໍ້ຂັດແຍ່ງ;
- ຂໍ້ສະເໜີຂອງຄູ່ກໍລະນີ.

ສະນັ້ນ, ເມື່ອໄດ້ຮັບຄໍາແກ້ຄໍາຮ້ອງຂໍແລ້ວ ພະແນກ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກ ຈາກຈະກວດກາເບື້ອງຕົ້ນຕໍ່ຄໍາແກ້ຄໍາຮ້ອງຂໍ ແລະ ເອກະສານທີ່ປະກອບດັ່ງກ່າວແລ້ວ ຍັງມີໜ້າທີ່ປະກອບເປັນສໍານວນ ຄໍາແກ້ຄໍາຮ້ອງຂໍສະເພາະ ເພື່ອສະເໜີຕໍ່ຫົວໜ້າສູນ ຫຼື ຫົວໜ້າຫ້ອງການແກ້ໄຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາດັ່ງນີ້:

ມອບສໍານວນຄໍາແກ້ຄໍາຮ້ອງຂໍ ໃຫ້ພະແນກແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ໜ່ວຍງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄົ້ນຄ້ວາເບື້ອງຕົ້ນ ເພື່ອເຊີນຄູ່ກໍລະນີທີ່ຍື່ນຄໍາແກ້ຄໍາຮ້ອງເຂົ້າມາຮັບຊາບພ້ອມທັງປຶກສາຫາລືເອກະພາບ ແລະ ຕົກລົງກ່ຽວກັບການເລືອກຮູບການ, ເລືອກກໍາມະການແກ້ໄຂ ໃນກໍລະນີມີຄວາມເປັນເອກະພາບກ່ຽວກັບຮູບການ ແລະ ກໍາມະການແກ້ໄຂແລ້ວກໍສາມາດນໍາເອົາຂໍ້ຂັດແຍ່ງດັ່ງກ່າວມາດໍາເນີນການແກ້ໄຂຢູ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້.

---

[2] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018, ມາດຕາ 18.

ມອບສຳນວນຄຳແກ້ຄຳຮ້ອງຂໍຄືນໃຫ້ ພະແນກສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າວສານ ຂອງ ສູນ ຫຼື ໜ່ວຍງານສັງລວມ ແລະ ຄຸ້ມຄອງຂໍ້ມູນຂ່າວສານ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແຈ້ງໃຫ້ຄູ່ກໍລະນີທີ່ຍື່ນຄຳແກ້ຄຳຮ້ອງເຂົ້າມາປັບປຸງເນື້ອໃນຄຳແກ້ຄຳຮ້ອງຂໍ ໃນກໍລະນີຄຳແກ້ຄຳຮ້ອງຂໍນັ້ນຫາກມີເນື້ອໃນບໍ່ທັນຄົບຖ້ວນ ຫຼື ນຳເອົາຂໍ້ມູນຫຼັກຖານທີ່ຈຳເປັນມາປະກອບເຂົ້າໃນສຳນວນຄຳແກ້ຄຳຮ້ອງລວມທັງການອະທິບາຍ ຫຼື ໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາທີ່ຈຳເປັນໃນກໍລະນີເຫັນວ່າຕ້ອງ ການຂໍ້ມູນ ແລະ ຫຼັກຖານເພີ່ມເຕີມ.

## 2. ທັກສະການແນະນຳຄູ່ກໍລະນີໃນການເລືອກການແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ

### 2.1. ການແນະນຳຄູ່ກໍລະນີໃນການເລືອກການແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ

ໃນການດຳເນີນການໄກ່ເກ່ຍຄູ່ກໍລະນີມີສິດເລືອກເອົາຜູ້ໄກ່ເກ່ຍໜຶ່ງ ຫຼື ຫຼາຍຄົນຈາກບັນຊີລາຍຊື່ຜູ້ໄກ່ເກ່ຍຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນສິບຫ້າວັນ ຖ້າຫາກເລືອກບໍ່ໄດ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນຫ້າວັນລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ.

ໃນພາກປະຕິບັດການເລືອກຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ ມີສອງວິທີຄື: ການເລືອກຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ໂດຍຄູ່ກໍລະນີຕົກລົງກັນໃວ້ໃນສັນຍາ ແລະ ຄູ່ກໍລະນີບໍ່ໄດ້ຕົກກັນໄວ້ໃນສັນຍາ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍຫາກໄດ້ຕົກລົງເປັນເອກະພາບກັນກຳນົດໃວ້ໃນສັນຍາວ່າ ຖ້າວ່າການ ດຳເນີນທຸລະກິດຂອງພວກຕົນ ຫາກມີຂໍ້ຂັດແຍ່ງເກີດຂຶ້ນຈະນຳໃຊ້ການແກ້ໄຂຂໍ້ຂັດແຍ່ງ ໂດຍ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນນີ້ຄູ່ກໍລະນີອາດຕົກລົງກັນ ກຳນົດກ່ຽວກັບການເລືອກຮູບການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ, ໄດ້ເລືອກຈຳນວນຜູ້ໄກ່ເກ່ຍ ຫຼື ບາງຄັ້ງຄູ່ກໍລະນີອາດບົ່ງຊື່ຜູ້ໄກ່ເກ່ຍໃວ້ໃນສັນຍາແລ້ວ. ສະນັ້ນ, ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນຄູ່ກໍລະນີໄດ້ເຂົ້າມາສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງ ເພື່ອແຈ້ງຈຸດປະສົງທີ່ພວກຕົນໄດ້ຕົກລົງກັນນັ້ນຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ພາຍຫຼັງໄດ້ຮັບການແຈ້ງຈາກຄູ່ກໍລະນີ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງ ຈະຖາມຄູ່ກໍລະນີຄືນກ່ຽວກັບການເລືອກຮູບການ, ເລືອກຈຳນວນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ແລະ ບຸກຄົນທີ່ຄູ່ກໍລະນີໄດ້ບົ່ງໄວ້ໃຫ້ເປັນຜູ້ໄກ່ເກ່ຍນັ້ນຄືນ ຖ້າຫາກຄູ່ກໍລະນີໄດ້ຢັ້ງຢືນເອົາຕາມການຕົກລົງກັນໃນສັນຍາ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະປະຕິບັດຕາມເຈດຈຳນົງ ແລະ ເນື້ອໃນທີ່ໄດ້ກຳນົດໄວ້ໃນສັນຍານັ້ນ ແລະ ສະເໜີໃຫ້ຄູ່ກໍລະນີປະກອບເອກະສານຕາມແບບພິມທີ່ສູນແກ້ໄຂຂໍ້ຂັດແຍ່ງກຳນົດອອກ ຈາກນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະປະສານໄປຫາຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ເພື່ອ ດຳເນີນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ.

ໃນກໍລະນີທີ່ຄູ່ກໍລະນີໄດ້ກຳນົດໄວ້ໃນສັນຍາວ່າ ຖ້າຫາກມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ເກີດຂຶ້ນໃນເວລາດຳເນີນທຸລະກິດຮ່ວມກັນຄູ່ກໍລະນີຈະນຳເອົາຂໍ້ຂັດແຍ່ງນັ້ນໄປແກ້ ຢູ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ບໍ່ໄດ້ກຳນົດໄວ້ໃນສັນຍາກໍຕາມ ເມື່ອຄູ່ກໍລະນີເຂົ້າມາສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ໄດ້ແຈ້ງຈຸດປະສົງເພື່ອນຳໃຊ້ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ ຊຶ່ງການຮ້ອງຂໍດັ່ງກ່າວບາງຄັ້ງກໍເກີດຈາກເຈດຈຳນົງຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງເປັນຜູ້ຍື່ນຄຳຮ້ອງຂໍ, ບາງຄັ້ງກໍເກີດມາຈາກເຈດຈຳນົງຂອງຄູ່ກໍລະນີທັງສອງຝ່າຍ ພາຍຫຼັງທີ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ຮັບຄຳຮ້ອງ ແລະ ປະກອບເອກະສານຈາກຜູ້ຮ້ອງຂໍແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເຊີນຝ່າຍຖືກຮ້ອງຂໍເຂົ້າມາຮັບຊາບ ແລະ ແນະນຳການຂຽນຄຳແກ້ຄຳຮ້ອງຂໍ ແລະ ປະກອບເອກະສານຕາມແບບພິມ

ຂອງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງ. ການເຊີນຄູ່ກໍລະນີເຂົ້າມາສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງ ແມ່ນສາມາດເຊີນໄດ້ຫຼາຍຄັ້ງ ເພື່ອຮັບປະກັນໃຫ້ທັງສອງຝ່າຍສາມາດຕົກລົງກັນໄດ້ກ່ຽວກັບຮູບການແກ້ໄຂ, ຈຳນວນຜູ້ໄກ່ເກ່ຍ ແລະ ການເລືອກເອົາຜູ້ໄກເກ່ຍ.

ໃນກໍລະນີຄູ່ກໍລະນີທັງສອງຝ່າຍຫາກບໍ່ເປັນເອກະພາບກັນກ່ຽວກັບຮູບການແກ້ໄຂ ແລະ ຈຳນວນຜູ້ໄກ່ເກ່ຍ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະອອກໝາຍເຊີນໃຫ້ຄູ່ກໍລະນີທັງສອງຝ່າຍ ເພື່ອເຂົ້າມາປຶກສາຫາລືຕົກລົງເປັນເອກະພາບກັນກ່ຽວກັບຮູບການແກ້ໄຂ ແລະ ຈຳນວນຜູ້ໄກ່ເກ່ຍ ເພື່ອມາດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນຊຶ່ງຄູ່ກໍລະນີທັງສອງຝ່າຍໄດ້ເລືອກເອົາຮູບການແກ້ໄຂ ແລະ ເລືອກຈຳນວນຜູ້ໄກ່ເກ່ຍບໍ່ກົງກັນເຊັ່ນ: ຝ່າຍໜຶ່ງເລືອກຮູບການໄກ່ເກ່ຍ, ອີກຝ່າຍໜຶ່ງເລືອກຮູບການຕັດສີນ, ຝ່າຍໜຶ່ງເລືອກເອົາຜູ້ໄກ່ເກ່ຍໜຶ່ງຄົນ ແຕ່ອີກຝ່າຍໜຶ່ງເລືອກເອົາຜູ້ໄກ່ເກ່ຍສາມຄົນ. ສະນັ້ນ, ໃນກໍລະນີດັ່ງກ່າວນີ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະອອກໝາຍເຊີນຫຼາຍຄັ້ງ ເພື່ອໃຫ້ຄູ່ກໍລະນີເຂົ້າມາຕົກລົງເປັນເອກະພາບກັນ.

ຜ່ານການເຊີນຫຼາຍຄັ້ງຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍຫາກບໍ່ເຂົ້າມາຕາມໝາຍເຊີນໂດຍບໍ່ມີເຫດຜົນພຽງພໍ ຫຼື ວ່າຄູ່ກໍລະນີໄດ້ເຂົ້າມາຕາມໝາຍເຊີນແລ້ວ ຜ່ານການປຶກສາຫາລືຄູ່ກໍລະນີບໍ່ສາມາດຕົກລົງກ່ຽວກັບຮູບການແກ້ໄຂ ຫຼື ຈຳນວນຜູ້ໄກ່ເກ່ຍ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະບໍ່ສາມາດດຳເນີນການແກ້ໄຂຕໍ່ໄປໄດ້ ແລະ ຈະສົ່ງສຳນວນຄຳຮ້ອງ, ຄຳແກ້ຄຳຮ້ອງ ພ້ອມທັງເອກະສານຕ່າງໆທີ່ປະກອບມານຳສຳນວນນັ້ນຄືນໃຫ້ຄູ່ກໍລະນີ.

ໃນກໍລະນີຄູ່ກໍລະນີທັງສອງຝ່າຍເຫັນດີເປັນເອກະພາບກັນກ່ຽວກັບຮູບການແກ້ໄຂ ແລະ ຈຳນວນຜູ້ໄກ່ເກ່ຍໄດ້ແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຈະອອກຂໍ້ຕົກລົງຮັບເອົາສຳນວນຄຳຮ້ອງຂໍມາພິຈາລະນາແກ້ໄຂພ້ອມທັງຂຶ້ນເລກທີ່ສຳນວນຂໍ້ຂັດແຍ່ງ.

ອີງຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງເລກທີ່ 51/ສພຊ, ລົງວັນທີ22 ມິຖຸນາ 2018 ໃນການດຳເນີນການໄກ່ເກ່ຍຄູ່ກໍລະນີມີສິດເລືອກເອົາຜູ້ໄກ່ເກ່ຍໜຶ່ງ ຫຼື ຫຼາຍຄົນຈາກບັນຊີລາຍຊື່ຜູ້ໄກ່ເກ່ຍຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນສິບຫ້າວັນ, ຖ້າຫາກເລືອກບໍ່ໄດ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນຫ້າວັນລັດຖະການພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບການເລືອກຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ ການເລືອກຜູ້ໄກ່ເກ່ຍມີວິທີປະຕິບັດດັ່ງນີ້:

### 2.1.1. ກໍລະນີເລືອກຜູ້ໄກ່ເກ່ຍໜຶ່ງຄົນ

ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຄູ່ກໍລະນີຕົກລົງເປັນເອກະພາບກັນເລືອກເອົາຜູ້ໄກ່ເກ່ຍໜຶ່ງຄົນຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສີນຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍຫຼັງທີ່ຄູ່ກໍລະນີເລືອກໄດ້ແລ້ວຕ້ອງເຮັດໜັງສືສະເໜີພ້ອມທັງສົ່ງລາຍຊື່ຜູ້ໄກ່ເກ່ຍທີ່ພວກຕົນເຫັນດີນັ້ນໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນກຳນົດສິບຫ້າວັນ ນັບແຕ່ວັນໄດ້ຕົກລົງເຫັນດີແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍເປັນຕົ້ນໄປ ເພື່ອໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແຕ່ງຕັ້ງເປັນຜູ້ໄກ່ເກ່ຍໃນຂັ້ນຕອນຕໍ່ໄປ ຖ້າຫາກວ່າຄູ່ກໍລະນີເລືອກເອົາຜູ້ໄກ່ເກ່ຍບໍ່ໄດ້ພາຍໃນກຳນົດເວລາສິບຫ້າວັນນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງຈາກຄູ່ກໍລະນີ ຫຼື ຫຼັງຈາກວັນສຸດທ້າຍຂອງກຳນົດເວລາທີ່ໄດ້ກຳນົດໄວ້ຂ້າງເທິງນີ້.

**ຕົວຢ່າງ:** ຝ່າຍຮ້ອງຂໍໄດ້ເລືອກເອົາຜູ້ (ຂ) ແລະ ຝ່າຍຖືກຮ້ອງຂໍ (ກ)ໄກ່ເກ່ຍໜຶ່ງຄົນຕາມປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເຊິ່ງຜ່ານການເລືອກແລ້ວໄດ້ຕົກລົງເຫັນດີເອົາຜູ້ໄກ່ເກ່ຍຊື່ ທ້າວ ງ ເພື່ອມາເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງໃຫ້ກັບພວກຕົນຕາມຂັ້ນຕອນຕໍ່ໄປ.

### 2.1.2. ກໍລະນີເລືອກເອົາຜູ້ໄກ່ເກ່ຍສອງຄົນ

ໃນກໍລະນີເລືອກເອົາຜູ້ໄກ່ເກ່ຍສອງຄົນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຄູ່ກໍ ລະນີແຕ່ລະຝ່າຍເລືອກເອົາໜຶ່ງຄົນ ພາຍໃນກໍານົດເວລາສິບຫ້າວັນ ນັບແຕ່ວັນຕົກລົງນັ້ນເປັນຕົ້ນໄປຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງຫາກເລືອກບໍ່ໄດ້ ຫຼື ບໍ່ເລືອກ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງຈາກຄູ່ກໍລະນີ ຫຼື ຫຼັງຈາກວັນສຸດທ້າຍຂອງກໍານົດເວລາທີ່ໄດ້ກໍານົດໄວ້ຂ້າງເທິງນີ້.

**ຕົວຢ່າງ:** ຝ່າຍຮ້ອງຂໍເລືອກຜູ້ (ກ)ໄກ່ເກ່ຍໜຶ່ງຄົນ ຊື່ ທ້າວ ສ ແລະ ຝ່າຍຖືກຮ້ອງຂໍກໍໄດ້ເລືອເອົາຜູ້ (ຂ)ໄກ່ເກ່ຍອີກໜຶ່ງຄົນ ຊື່ ທ້າວ ດ ຕາມປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເຊັ່ນກັນ ຫຼັງຈາກທີ່ໄດ້ຜູ້ໄກ່ເກ່ຍຂອງສອງຝ່າຍແລ້ວທີ່ຖືກເລືອກນັ້ນກໍຈະມາເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງໃຫ້ກັບພວກຕົນຕາມຂັ້ນຕອນຕໍ່ໄປ.

### 2.1.3. ກໍລະນີເລືອກເອົາຜູ້ໄກ່ເກ່ຍສາມຄົນ

ເມື່ອຄູ່ກໍລະນີເຫັນດີເປັນເອກະພາບກັນເລືອກເອົາຜູ້ໄກ່ເກ່ຍສາມຄົນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະສະເໜີໃຫ້ຄູ່ກໍລະນີເລືອກເອົາຜູ້ໄກ່ເກ່ຍຝ່າຍລະໜຶ່ງຄົນຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ ພາຍໃນເວລາສິບຫ້າວັນ ນັບແຕ່ວັນທີ່ຄູ່ກໍລະນີເຫັນດີແກ້ໄຂດ້ວຍຮູບການໄກ່ເກ່ຍເປັນ ຕົ້ນໄປ. ຕໍ່ຈາກນັ້ນແມ່ນໃຫ້ຜູ້ໄກ່ເກ່ຍສອງຄົນທີ່ຖືກເລືອກຈາກຄູ່ກໍລະນີແຕ່ລະຝ່າຍນັ້ນເລື່ອກເອົາຜູ້ໄກ່ເກ່ຍອີກໜຶ່ງຄົນຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ ຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເພື່ອມາເປັນປະທານຄະນະກໍາມະການໄກ່ເກ່ຍພາຍໃນເວລາສິບຫ້າວັນ.

ພາຍຫຼັງເລືອກປະທານໄດ້ແລ້ວ ຕ້ອງເຮັດໜັງສືສະເໜີພ້ອມທັງສິ່ງລາຍຊື່ຜູ້ໄກ່ເກ່ຍທີ່ພວກຕົນຕົນເຫັນດີນັ້ນໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແຕ່ງຕັ້ງຄະນະໄກ່ເກ່ຍໃນຂັ້ນຕອນຕໍ່ໄປຕາມໃບສະເໜີຂອງຄູ່ກໍລະນີ.

ຖ້າຫາກວ່າຄູ່ກໍລະນີເລືອກເອົາຜູ້ໄກ່ເກ່ຍບໍ່ໄດ້, ບໍ່ເລືອກ ຫຼື ເລືອກບໍ່ທັນພາຍໃນກໍານົດເວລາສິບຫ້າວັນນັ້ນສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນເວລາຫ້າວັນລັດຖະການນັບແຕ່ວັນທີ່ໄດ້ຮັບແຈ້ງຈາກຄູ່ກໍລະນີ ຫຼື ຫຼັງຈາກວັນສຸດທ້າຍຂອງກໍານົດເວລາທີ່ກ່າວໄວ້ຂ້າງເທິງນີ້.

ໃນກໍລະນີທີ່ຜູ້ໄກ່ເກ່ຍສອງຄົນທີ່ຖືກເລືອກຈາກຄູ່ກໍລະນີນັ້ນ ຫາກເລືອກເອົາຜູ້ທີ່ສາມມາເປັນປະທານບໍ່ເປັນເອກະພາບກັນ ຫຼື ເລືອກບໍ່ໄດ້ ຫຼື ເລືອກບໍ່ທັນພາຍໃນສິບຫ້າວັນລັດຖະການ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນເວລາຫ້າວັນລັດຖະການ ພ້ອມທັງແຈ້ງໃຫ້ຜູ້ໄກ່ເກ່ຍທັງສອງຄົນໄດ້ຮັບຊາບ.

**ຕົວຢ່າງ:** ຝ່າຍຮ້ອງຂໍເລືອກຜູ້ (ກ)ໄກ່ເກ່ຍໜຶ່ງຄົນ ຊື່ ທ້າວ ຊ ແລະ ຝ່າຍຖືກຮ້ອງຂໍກໍໄດ້ເລືອເອົາຜູ້ (ຂ)ໄກ່ເກ່ຍອີກໜຶ່ງຄົນ ຊື່ ທ້າວ ມ ຕາມປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເຊັ່ນກັນ ຫຼັງຈາກນັ້ນຜູ້ໄກ່ເກ່ຍທັງສອງຝ່າຍກໍໄດ້ເລືອກເອົາຜູ້ໄກ່ເກ່ຍຜູ້ທີ່ສາມມາເປັນປະທານການໄກ່ເກ່ຍຂໍ້ຂັດແຍ່ງຂອງພວກຕົນຕາມຂັ້ນຕອນຕໍ່ໄປ.

## 2.2. ການແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ

ການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະໄກ່ເກ່ຍ ແມ່ນສິດ ແລະ ໜ້າທີ່ຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍຫຼັງທີ່ຄູ່ກໍລະນີເລືອກໄດ້ຜູ້ໄກ່ເກ່ຍໜຶ່ງ ຫຼື ຫຼາຍຄົນ ຫຼື ພາຍຫຼັງທີ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເລືອກໃຫ້ແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງອອກຂໍ້ຕົກລົງແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍພາຍໃນກຳນົດເວລາຫ້າວັນລັດຖະການນັບແຕ່ວັນທີ່ໄດ້ຮັບລາຍຊື່ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍເປັນຕົ້ນໄປ.

ໃນພາກປະຕິບັດກ່ອນການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງຈະຕ້ອງໄດ້ຖາມເບິ່ງເຈດຈຳນົງຂອງເປົ້າໝາຍຜູ້ທີ່ຈະແຕ່ງຕັ້ງໃຫ້ເປັນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍກ່ອນວ່າຜູ້ກ່ຽວສາມາດຮັບເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງດັ່ງກ່າວໄດ້ ຫຼື ບໍ່ ແລະ ຜູ້ກ່ຽວສາມາດຮັບເອົາຄ່າແຮງງານທີ່ໄດ້ຕົກລົງກັບຄູ່ລະນີໄດ້ ຫຼື ບໍ່ ຖ້າຜູ້ໄກ່ເກ່ຍຕອບຮັບແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດ ກໍຈະດຳເນີນການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍໄດ້, ແຕ່ກົງກັນຂ້າມຖ້າຫາກຜູ້ໄກ່ເກ່ຍບໍ່ສາມາດຮັບເອົາຄ່າແຮງງານຕາມທີ່ໄດ້ຕົກກັນກໍຖືວ່າເປົ້າໝາຍໄດ້ປະຕິເສດບໍ່ຮັບເປັນຜູ້ໄກ່ເກ່ຍ ໃນພາກປະຕິບັດຕົວຈິງບາງກໍລະນີຜູ້ທີ່ເປັນເປົ້າໝາຍນັ້ນສາມາດປະຕິ ໃເສດຮັບເປັນຜູ້ໄກ່ເກ່ຍໃນກໍລະນີໃດໜຶ່ງດັ່ງນີ້:

- ມີຄວາມໝັ້ນໃຈທາງດ້ານວິຊາສະເພາະໃດໜຶ່ງຂອງຕົນ;
- ບໍ່ສາມາດຕົກລົງຮັບເອົາຄ່າແຮງງານກັບຄູ່ກໍລະນີ ຫຼື ຜູ້ຕັດສິນສອງຄົນທີ່ຖືກເລືອກຈາກຄູ່ກໍລະນີໄດ້;
- ຖືກຊັບຊ້ອນໄປປະຕິບັດໜ້າທີ່ວຽກງານຢູ່ທ້ອງຖິ່ນອື່ນ ຫຼື ຢູ່ຕ່າງປະເທດ;
- ເສຍຊີວິດກະທັນຫັນ.

ການປະຕິເສດເປັນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະແຈ້ງຄືນຫາຄູ່ກໍລະນີ ເພື່ອເຂົ້າສູ່ຂະບວນການເລືອກເອົາຜູ້ໄກ່ເກ່ຍຄືນໃໝ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ພາຍຫຼັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍແລ້ວ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະມອບສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ເພື່ອດຳເນີນການແກ້ໄຂການແກ້ໄຂຂໍ້ຂັດແຍ່ງໃນຂັ້ນຕອນຕໍ່ໄປ.

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
2. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
3. ປຶ້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.